ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທ່ານຮອງຜູ້ວ່າການ ທຫລ ຊີ້ນໍາວຽກງານ 3 ແຂວງພາກໃຕ້



ໃນລະຫວ່າງວັນທີ 16-20 ກຸມພາ 2022 ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ຈໍານວນ 17 ທ່ານ ໄດ້ເຄື່ອນໄຫວວຽກງານລັດຖະການຢູ່ 3 ແຂວງ ພາກໃຕ້ ຄື ແຂວງ ຈໍາປາສັກ, ແຂວງສາລະວັນ ແລະ ແຂວງ ອັດຕະປື.

ຈຸດປະສົງຂອງການເຄື່ອນໄຫວວຽກງານໃນຄັ້ງນີ້ແມ່ນເພື່ອເກັບກໍາສະພາບການຄຸ້ມຄອງເງິນຕາຕ່າງປະເທດທີ່ຕິດພັນກັບການຄ້າ ແລະ ການຊໍາລະຂ້າມແດນ ເພື່ອກະກຽມໃຫ້ແກ່ການປັບປຸງກົດໝາຍຄຸ້ມຄອງເງິນຕາຕ່າງປະເທດ ແລະ ນິຕິກໍາລຸ່ມກົດໝາຍ, ເພື່ອເກັບກໍາສະພາບການການຄຸ້ມຄອງເງິນຕາຕ່າງປະເທດທີ່ຕິດພັນກັບການຄຸ້ມຄອງຮ້ານແລກປ່ຽນເງິນຕາຕ່າງປະເທດ ແລະ ອັດຕາແລກປ່ຽນ, ທັງເປັນການຊຸກຍູ້ສະພາບສິນເຊື່ອເພື່ອສົ່ງເສີມການຜະລິດ. ພ້ອມດຽວກັນນັ້ນ, ຍັງໄດ້ໄປລົງຢ້ຽມຢາມບັນດາໂຄງການສິນເຊື່ອທີ່ມີປະສິດທິພາບຈໍານວນໜຶ່ງ.



ເສດຖະກິດຈະເຂັ້ມແຂງຖ້າທຸກຄົນຮ່ວມແຮງນຳໃຊ້ເງິນກີບ